by chensiyuan CC-BY-SA 3.0





## ສິງກະໂປ

**ເຂົ້າຮ່ວມອາຊຽນ:** 8 ສິງຫາ 1967

**ນະຄອນຫຼວງ:** ສິງກະໂປ

**ປະຊາກອນ:** 4.7 ລ້ານ ຄົນ

**ເນື້ອທີ່:** 697 ກມ$^2$

**ຄວາມໜາແໜ້ນ:** 6800 ຄົນ/ກມ$^2$

**ອາຍຸປານກາງ:** 40.1 ປີ

**ສາສະໜາ:** ສິງກະໂປ ມີສາສະໜາປະສົມຫຼາຍທີ່ສຸດ ຖ້າທຽບໃສ່ປະເທດອື່ນໆໃນກຸ່ມອາຊຽນ. ມີທັງສາສະໜາພຸດ, ມຸດສະລິມ, ຄິສຕຽນ ແລະ ຮິນດູ.

**ພາສາ:** ພາສາຈີນກາງ ແລະ ອັງກິດ (ເປັນທາງການ) ເຊັ່ນກັນກັບພາສາມະເລ ແລະ ພາສາຈີນອື່ນໆ.

**ເສດຖະກິດ:** ສິງກະໂປ ຖືກເອີ້ນກັນວ່າ ເປັນໜຶ່ງໃນ "ມັງກອນນ້ອຍສີ່ໂຕຂອງເອເຊຍ" ຍ້ອນຄວາມມັ່ງຄັ່ງເຂັ້ມແຂງທາງດ້ານເສດຖະກິດ. (ສ່ວນ "ມັງກອນນ້ອຍ" ໂຕອື່ນໆນັ້ນແມ່ນ ເກົາຫຼີໃຕ້, ຮົງກົງ ແລະ ໄຕ້ຫວັນ) ເຊິ່ງມັນເປັນປະເທດທີ່ທັນສະໄໝ ໄຮເທັກ ປາສະຈາກກະສິກຳ. ລາຍໄດ້ສ່ວນຫຼາຍມາຈາກການຜະລິດເຄື່ອງມືເອເລັກໂຕຼນິກ, ຢາ ແລະ ເຄື່ອງກົນຈັກທີ່ມີຄຸນນະພາບ.

**ລາຍໄດ້ຕໍ່ຄົນ:** $37,220 (US)

**ລາຍໄດ້ປຽບທຽບຕໍ່ຄົນ:** $57,200 (US)

**ລະດັບລາຍໄດ້ປຽບທຽບ:** 6

**ສຳປະສິດຈີນີ:** 47.8





# ສິງກະໂປ

## ພູມມິປະເທດ

ສິງກະໂປເປັນປະເທດທີ່ນອນບົນເກາະໜຶ່ງທີ່ໃຫຍ່ ເຊິ່ງເຊື່ອມຕໍ່ໄປຫາມາເລເຊຍໂດຍທາງຖະໜົນ ແລະມີອີກ 40 ເກາະເຊິ່ງເປັນເກາະນ້ອຍ.

## ປະຫວັດສາດ

ເປັນເວລາຫຼາຍຮ້ອຍປີ ທີ່ສິງກະໂປເປັນເຮືອນຂອງຊາວປະມົງຈຳນວນໜຶ່ງ. ຊາວຄ້າຂາຍຈາກຈີນ ແລະ ຈາກເກາະດອນອ້ອມຂ້າງ ມັກຈະຈອດພັກເຮືອຢູ່ທີ່ນັ້ນ. ຊື່ "ສິງກະໂປ" ມາຈາກຄຳວ່າ "ສິງ" ຄົນທີ່ມາແວະຢາມທຳອິດເຫັນເສືອ ແລະຄິດວ່າມັນແມ່ນສິງ. ໂຈນສະລັດກໍ່ອາໄສຢູ່ບົນເກາະຄືກັນ ຖ້າບໍ່ອອກໄປໂຈມຕີເຮືອກຳປັ່ນ.

ເກາະສ່ວນຫຼາຍເປັນບຶງ. ຕອນຄົນອັງກິດກຸ່ມທຳອິດມາຮອດປີ 1819. ຈາກນັ້ນບໍ່ດົນອັງກິດກໍ່ຕ້ອງການອຳນາດຄວບຄຸມອັນເຂັ້ມແຂງກວ່າບົນ



ທ່ານ ໂທມັສ ຣາໂຟ (Thomas Raffles) ແມ່ນແມ່ທັບຂອງອັງກິດ ເປັນຜູ້ປົກຄອງ ແລະ ເປັນນັກທຳມະຊາດວິທະຍາ.

ທ່ານ ຣາໂຟ ໄດ້ເຮັດວຽກໃຫ້ກັບມະຫາອຳນາດທົ່ວເມືອງຂຶ້ນກໍ່ຈິງ ແຕ່ເພິ່ນກໍ່ໄດ້ຍົກລະດັບຊີວິດການເປັນຢູ່ຂອງຄົນທ້ອງຖິ່ນໃຫ້ດີຂຶ້ນນຳ. ເພິ່ນໄດ້ລົບລ້າງລະບົບຂ້າທາດໃນເກາະຊາວາ ແລະ ໄດ້ໃຫ້ສິດແກ່ຊາວໄຮ່ຊາວນາໃນການຄອບຄອງດິນດອນຕອນຫຍ້າຂອງພວກເຂົາ.

ນອກຈາກນັ້ນແລ້ວ ທ່ານ ຣາໂຟ ຍັງໄດ້ສ້າງຕັ້ງເມືອງສິງກະໂປຂຶ້ນມາ ເຊິ່ງປະຈຸບັນມີອາຍຸເກືອບ 200ປີ. ຮູບຂ້າງເທິງນີ້ຄືປະເທດສິງກະໂປໃນປະຈຸບັນ.



ສິງກະໂປແມ່ນທ່າເຮືອທີ່ສຳຄັນ ແລະ ຍັງມີອຸດສາຫະກຳຕໍ່ເຮືອຢູ່ທີ່ນັ້ນດ້ວຍ. ຮູບພາບນີ້ແມ່ນຖ່າຍໃນປະມານປີ 1895.

ຊ່ອງແຄບມາລາກາ ບ່ອນທີ່ ເຮືອກຳປັ່ນເດີນທາງຜ່ານ ເມື່ອພວກເຂົາເດີນເຮືອລະຫວ່າງອິນເດຍ ແລະ ຈີນ.

ອັງກິດຍັງຄວບຄຸມມາເລເຊຍທີ່ຕິດກັບສິງກະໂປ. ມາເລເຊຍ ແລະ ສິງກະໂປເປັນເອກະລາດພ້ອມກັນ ໂດຍຖືກໂຮມເປັນປະເທດດຽວກັນໃນປີ 1963. ແຕ່ວ່າປະຊາຊົນສິງກະໂປ ແລະ ມາເລເຊຍມີວັດທະນະທຳ ແລະ ຊົນເຜົ່າບູຮານທີ່ແຕກຕ່າງກັນ, ພວກເຂົາຈຶ່ງຢູ່ຮ່ວມກັນບໍ່ໄດ້ດີປານໃດ. ສອງປີຕໍ່ມາ ທຸກຄົນເຫັນດີວ່າ ພວກເຂົາຄວນຈະເປັນຄົນລະປະເທດ. ຕັ້ງແຕ່ນັ້ນມາເສດຖະກິດຂອງສິງກະໂປກໍ່ເຕີບໂຕຢ່າງໄວວາ ແລະໄດ້ກາຍເປັນສູນກາງອັນໃຫຍ່ໂຕຂອງການຜະລິດ ແລະ ການຄ້າຂາຍຂອງໂລກ.



ທ່ານ ລີກວນຢິວ (Lee Kuan Yew) ໄດ້ເປັນນາຍົກລັດຖະມົນຕີຜູ້ທຳອິດແຫ່ງສິງກະໂປໃນປີ 1959 ແລະ ໄດ້ຮັກສາຕຳແໜ່ງໄວ້ເຖິງ 31 ປີ. ເພິ່ນໄດ້ກຳຈັດລັດຖະບານທີ່ກິນສິນບົນສ່ວນຫຼາຍ ແລະ ປັບປຸງລະບົບການສຶກສາທີ່ຍິ່ງໃຫຍ່ຂຶ້ນ. ພາຍໃຕ້ການນຳພາຂອງເພິ່ນ ປະເທດສິງກະໂປຈຶ່ງໄດ້ມີການປະຕິຮູບຈາກທົ່ວເມືອງຂຶ້ນນ້ອຍໆກ້າວໄປສູ່ການເປັນປະເທດໜຶ່ງທີ່ເຂັ້ມແຂງທີ່ສຸດໃນໂລກທາງດ້ານເສດຖະກິດ.



Sengkang, CC-BY-SA 3.0

## ເປັນນະຄອນລັດ ແຫ່ງດຽວຂອງໂລກໃນເອເຊຍ

ນະຄອນລັດ (ປະເທດດຽວ ເມືອງດຽວ) ແມ່ນເມືອງທີ່ເປັນເອກະລາດຈາກປະເທດໃຫຍ່ອື່ນ. ແຕ່ບູຮານມາ ນະຄອນລັດເປັນລະບົບປົກຄອງທີ່ກະຈາຍໄປທົ່ວໂລກ. ລັດຖະບານຮູບແບບໃໝ່ສ່ວນຫຼາຍລ້ວນແຕ່ຜ່ານການເປັນນະຄອນລັດມາ. ລະບົບທີ່ອ່ອນແອໄດ້ສູນຫາຍໄປ. ລະບົບລັດຖະບານທີ່ໄດ້ເຍືອງໃຫ້ເຫັນຄວາມສຳເລັດໄດ້ແຜ່ຂະຫຍາຍຈົນເປັນປະເທດທີ່ກວ້າງກວ່າ. ປະຈຸບັນນີ້ ມີພຽງນະຄອນລັດຈຳນວນໜ້ອຍດຽວທີ່ຫຼົງເຫຼືອໃນໂລກ. ສິງກະໂປເປັນພຽງນະຄອນລັດແຫ່ງດຽວໃນກຸ່ມປະເທດອາຊຽນ.



by TteckK CC-BY-SA 3.0



Sengkang, CC-BY-SA 3.0

# ສາສະໜາໃນປະເທດສິງກະໂປ

ໃນປະເທດສິງກະໂປແມ່ນປະກອບໄປດ້ວຍຜູ້ຄົນທີ່ມາຈາກວັດທະນະທຳຕ່າງໆ ແລະ ມີພິທີປະຕິບັດທາງສາສະໜາທີ່ຕ່າງກັນ. ປະຊາກອນສ່ວນໃຫຍ່ແມ່ນເຊື່ອຖືສາສະໜາພຸດ ແຕ່ແມ່ນສາສະໜາພຸດທີ່ຕ່າງກັບສາສະໜາພຸດຢູ່ໃນປະເທດລາວ. ສອງຮູບທີ່ຢູ່ຂ້າງເທິງນັ້ນແມ່ນໄດ້ສະແດງໃຫ້ເຫັນວິຫານຂອງພຸດທະສາສະໜາ.

ຮູບດ້ານຂວາ ແມ່ນຮູບວິຫານຂອງສາສະໜາຮິນດູທີ່ເກົ່າແກ່ທີ່ສຸດໃນປະເທດສິງກະໂປ. ບັນດາຜູ້ທີ່ຍົກຍ້າຍມາຈາກອິນເດຍໄດ້ນຳເອົາສາສະໜາຮິນດູເຂົ້າມາໃນສິງກະໂປພ້ອມ. ປະຕູໂຂງອັນລະອຽດອ່ອນນີ້ແມ່ນສ້າງໃນຮູບແບບຂອງອິນເດຍ ເຊິ່ງມີຫົກຊັ້ນອັນວິຈິດງາມຕາ. ແຕ່ລະຊັ້ນແມ່ນປະດັບໄປດ້ວຍຮູບປັ້ນນ້ອຍໆຂອງພະເຈົ້າຮິນດູທີ່ມີການລົງສີຢ່າງສົດໃສ.

ໃນປະເທດສິງກະໂປຍັງມີອີກຫຼາຍຄົນທີ່ເຊື່ອໃນສາສະໜາມຸດສະລິມກັບສາສະໜາຄິສຕຽນ ແລະ ຍັງມີຫຼາຍຄົນທີ່ບໍ່ໄດ້ເຊື່ອຖືສາສະໜາໃດເລີຍ. ເປັນປະເທດທີ່ມີຄວາມເຊື່ອຖືທາງສາສະໜາທີ່ຕ່າງກັນຫຼາຍກວ່າປະເທດໃດໆໃນອາຊຽນ.



# ເຈົ້າສາມາດອ່ານເພີ່ມ ເຕີມໄດ້ໃນປຶ້ມຫົວນີ້!



**ກຸ່ມປະເທດ ອາຊຽນ**
ຂຽນ: ລຸງຊາຊ່າ, ແຕ້ມ: ເຊັ່ງໄຊ ກູ່ຊົ່ງ ແລະ ກົ່ງຊົ່ວ ເຊັ່ງລີ, ແປ: ໄຜ່ຫວານ, ໂຣຊັນນາ ບໍລິການແປພາສາ.
ກວດແກ້: ບັນນາທິການ ອ້າຍໜູນ້ອຍ, ຈັດພິມໂດຍ: ສຳນັກພິມ ອ້າຍຫນູນ້ອຍ, ຫຼວງພະບາງ.
ທະບຽນອະນຸຍາດ: ລທບ 370/ພຈ08112011. ພິມຄັ້ງທີ1
ພິມທີ່ ໂຮງພິມ ສີສະຫວາດ, ວຽງຈັນ, 2011. ຂະໜາດ 19x26ຊມ, ຈຳນວນ 6000 ຫົວ
ສະຫງວນລິຂະສິດບົດຂຽນ © 2012 ລຸງຊາຊ່າ, ສະຫງວນລິຂະສິດຮູບແຕ້ມ © 2012 ອ້າຍໜູນ້ອຍ

ບາງຮູບພາບໃນປຶ້ມຫົວນີ້ ໄດ້ມາຈາກ www.wikipedia.com. ບາງຮູບເຂົາເຈົ້າບໍ່ຖືລິຂະສິດ ບາງຮູບກໍ່ອະນຸຍາດໃຫ້ໃຊ້ຕາມລະບຽບຂອງອົງການ Creative Commons. ລາຍລະອຽດທ່ານສາມາດເຂົ້າຊົມ http://creativecommons.org/licenses/bysa/3.0/ (ຫຼື 2.5 ຫຼື 2.0, ຫຼື ຕາມທີ່ໄດ້ຂຽນໄວ້ແຕ່ລະຮູບ). ພວກເຮົາຂໍຂອບໃຈນຳບັນດານັກຖ່າຍຮູບທັງຫຼາຍ ທີ່ເຮັດວຽກຢ່າງໜັກ ເພື່ອໃຫ້ຜູ້ຄົນໄດ້ນຳໃຊ້ຢ່າງກວ້າງຂວາງ. ໜ້າປົກ: ຄວາຍ: PaulRudd CC-BY-SA 3.0; ນັກຟ້ອນ: Frank Wouters, CC-BY-SA 2.0; ປະຕູໄຊ: Slug78 CC-BY-SA 2.0; ສຸເລົ່າ: Azreey CC-BY-SA 3.0

**The Countries of ASEAN,** with non-fiction text and story selection by Sasha Alyson, Story illustrations by Sengsay Khousong and Kongsoua Sengli. Published by Big Brother Mouse, Luang Prabang, Lao PDR.


ກຸ່ມປະເທດ
ອາຊຽນ
ໂດຍ: ລຸງຊາຊ່າ
ມຽນມ້າ
ລາວ
ໄທ
ຫວຽດນາມ
ກຳປູເຈຍ
ຟີລິບປິນ
ມາເລເຊຍ
ບຣູໄນ
ສິງກະໂປ
ອິນໂດເນເຊຍ
ປະຫວັດສາດ • ວັດທະນະທຳ • ພູມມີປະເທດ • ສາສະໜາ • ນິທານ